ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ສສຊ ເຂດ 1 ພົບປະພະນັກງານທະນາຄານ




ໃນວັນທີ 13 ມີນາ ຜ່ານມານີ້ ທີ່ສະໂມສອນສະຖາບັນການທະນາຄານ, ທະນາຄານແຫ່ງ ສປປ ລາວ (ທຫລ) ນະຄອນຫຼວງວຽງຈັນ; ຄະນະພັກ-ຄະນະນຳ ທຫລ ໂດຍມີທ່ານ ສອນໄຊ ສິດພະໄຊ ກຳມະການສຳຮອງສູນກາງພັກ, ເລຂາຄະນະພັກ-ຜູ້ວ່າການ ທຫລ ໄດ້ໃຫ້ກຽດຕ້ອນຮັບບັນດາສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ VIII ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ຊຶ່ງນຳໂດຍທ່ານ ປອ. ອານຸພາບ ຕຸນາລົມ ກຳມະການສູນກາງພັກ, ສສຊ ຊຸດທີ VIII ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ, ປະທານສະພາປະຊາຊົນນະຄອນຫຼວງວຽງຈັນພ້ອມຄະນະ ເຂົ້າພົບປະ, ຕິດຕາມ, ກວດກາ ແລະ ຮັບຟັງການລາຍງານການຈັດຕັ້ງປະຕິບັດວຽກງານໃນຂະແໜງການທະນາຄານ; ພ້ອມທັງເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນ ເທື່ອ 6 ຂອງສະພາແຫ່ງຊາດ ຊຸດທີ VIII ໂດຍມີບັນດາພະນັກງານຂັ້ນນຳ-ຂັ້ນວິຊາການຂອງ ທຫລ ແລະ ທະນາຄານລັດ ເຂົ້າຮ່ວມ.

ທີ່ປະຊຸມ ຍັງຮັບຟັງການລາຍງານສະພາບການເຄື່ອນໄຫວວຽກງານຂອງ ທຫລ ໂດຍອີງໃສ່ມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 075/ສພຊ ລົງວັນທີ 17 ພະຈິກ 2017 ຊຶ່ງໃນປີ 2018 ທຫລ ໄດ້ຮັກສາສະຖຽນລະພາບທາງດ້ານເງິນຕາໃນທ່າມກາງຄວາມຜັນຜວນຂອງອັດຕາແລກປ່ຽນ, ລາຄານ້ຳມັນຢູ່ຕະຫຼາດສາກົນບວກກັບຄວາມຫຍຸ້ງຍາກທາງດ້ານງົບປະມານ ແລະ ບັນຫາໜີ້ສິນຄຸມເຄືອ; ຈາກສະພາບການດັ່ງກ່າວ, ທຫລ ໄດ້ດຳເນີນນະໂຍບາຍເງິນຕາແບບຜ່ອນຄາຍດ້ວຍການອັດສີດເງິນເຂົ້າສູ່ລະບົບເສດຖະກິດຜ່ານສິນເຊື່ອເພື່ອຊຸກຍູ້ການຜະລິດ, ແກ້ໄຂຄວາມທຸກຍາກ ແລະ ລ່ວງໜ້າເພື່ອດຸນດ່ຽງງົບປະມານຈຳນວນໜຶ່ງ; ສືບຕໍ່ນຳໃຊ້ເຄື່ອງມືນະໂຍບາຍເງິນຕາທີ່ສຳຄັນຈຳນວນໜຶ່ງ. ພ້ອມນັ້ນຍັງປະຕິບັດນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດເປັນເຄື່ອງມືຕົ້ນຕໍ, ນຳໃຊ້ມາດຕະການບໍລິຫານໃນການຄຸ້ມຄອງເງິນຕາຕ່າງປະເທດ ແລະ ເອົາໃຈໃສ່ຊຸກຍູ້ທະນາຄານທຸລະກິດປັບປຸງການບໍລິການ ແລະ ຫັນເປັນທັນສະໄໝ ເພື່ອສົ່ງເສີມການຊຳລະສະສາງຜ່ານລະບົບທະນາຄານຫຼາຍຂຶ້ນ.






ມາຮອດປັດຈຸບັນ; ຕະຫຼາດຫຼັກຊັບລາວມີບໍລິສັດຈົດທະບຽນ 9 ບໍລິສັດ, ມູນຄ່າ ຕລຊລ ເທົ່າກັບ 6,90% GDP, ມີມູນຄ່າການຊື້-ຂາຍ 90,17 ຕື້ກວ່າກີບ; ສໍາເລັດການສ້າງກົນໄກເພື່ອນໍາເອົາພັນທະບັດລັດຖະບານຊື້-ຂາຍຜ່ານຕະຫຼາດຫຼັກຊັບລາວ ແລະ ອອກຜະລິດຕະພັນໃໝ່ໃນຕະຫຼາດຫຼັກຊັບເພື່ອດຶງດູດແກ່ການລົງທຶນ. ນອກນັ້ນ, ຍັງຄຸ້ມຄອງລະບົບທະນາຄານ ແລະ ສະຖາບັນການເງິນໃຫ້ມີຄວາມໜັກແໜ້ນ-ເຂັ້ມແຂງຊຶ່ງສາມາດຮັກສາສະຖຽນລະພາບເງິນຕາ ແລະ ປະຕິບັດຄາດໝາຍດ້ານເງິນຕາທີ່ສະພາແຫ່ງຊາດຮັບຮອງໄດ້ດີສົມຄວນ; ແກ້ໄຂຄໍາເຫັນຂອງປະຊາຊົນທີ່ມີຄວາມສົນໃຈຊຶ່ງຕິດພັນກັບຂະແໜງທະນາຄານທີ່ສະເໜີຜ່ານສະພາແຫ່ງຊາດຢ່າງຖືກທິດ, ເປັນທີ່ພໍໃຈຂອງສັງຄົມໃນລະດັບດີ; ຂະນະດຽວກັນ, ຍັງສະເໜີໃຫ້ ສສຊ ຊ່ວຍແນະນໍາປະຊາຊົນໄດ້ເຂົ້າໃຈວຽກງານທີ່ຕິດພັນກັບຂະແໜງທະນາຄານ ໂດຍສະເພາະການເຂົ້າເຖິງແຫຼ່ງທຶນຂອງທະນາຄານ.

ໃນໂອກາດດັ່ງກ່າວ; ທ່ານ ປອ. ອານຸພາບ ຕຸນາລົມ ສສຊ ຊຸດທີ VIII ປະຈໍາເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນພ້ອມຄະນະກໍ່ໄດ້ພັດປ່ຽນກັນແຈ້ງຜົນສໍາເລັດຂອງກອງປະຊຸມສະໄໝສາມັນ ເທື່ອ 6 ຂອງສະພາແຫ່ງຊາດ ຊຸດທີ VIII ໂດຍຍົກໃຫ້ເຫັນການບໍລິຫານລັດຂອງຄະນະລັດຖະບານທີ່ໄດ້ແຈ້ງສະພາບການລວມໃນການຈັດຕັ້ງປະຕິບັດ ຊຶ່ງມີຫຼາຍອັນທີ່ພົ້ນເດັ່ນ ແລະ ບາງດ້ານທີ່ຈະຕ້ອງຮັບການແກ້ໄຂໃນຕໍ່ໜ້າ; ພ້ອມນັ້ນ, ຍັງແຈ້ງໃຫ້ເຫັນຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ; ແຜນງົບປະມານ ແລະ ທິດທາງແຜນການໃນຕໍ່ໜ້າ ແລະ ບັນຫາທີ່ສໍາຄັນອື່ນໆໃນນີ້ກໍ່ມີ 11 ຂໍ້ໃຫຍ່ ແຕ່ໃນທີ່ປະຊຸມຍັງໄດ້ສະເໜີຕົວຈິງ 4 ບັນຫາ ໃນນີ້ມີບັນຫາທາງລົດໄຟ; ລາຄາສິນຄ້າ; ການແກ້ໄຂຄວາມທຸກຍາກ ພັດທະນາຊົນນະບົດ ແລະ ບັນຫາຄວາມຍຸຕິທໍາໃນສັງຄົມ ຊຶ່ງ ສສຊ 4 ທ່ານ ໄດ້ເນັ້ນບັນຫາທີ່ເກີດຂຶ້ນຕົວຈິງ ເຊັ່ນ: ບັນຫາເສດຖະກິດຝືດເຄືອງ; ການສໍ້ລາດບັງຫຼວງທີ່ມີທ່າອ່ຽງເພີ່ມຂຶ້ນ; ຄວາມບໍ່ໂປ່ງໃສໃນຂະບວນການຍຸຕິທໍາ ແລະ ບັນຫາອື່ນໆທີ່ຕ້ອງຮັບການແກ້ໄຂຢ່າງຖືກຕ້ອງ ແລະ ຮີບດ່ວນ. ນອກນີ້; ທີ່ປະຊຸມຍັງໄດ້ມີການຊັກຖາມຈາກບັນດາຜູ້ເຂົ້າຮ່ວມ ແລະ ໄດ້ຮັບການຕອບແກ້ເປັນທີ່ແຈ່ມແຈ້ງຈາກບັນດາທ່ານ ສສຊ ທີ່ມາພົບປະໃນຄັ້ງນີ້.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ.**

# ແລກປ່ຽນເງິນຕາຊະຊາຍ ຜິດລະບຽບກົດໝາຍບ້ານເມືອງ